# ການໃຫ້ທຶນສະໜັບສະໜູນເພີ້ມເຕີມ ຈາກ ທະນາຄານໂລກ ເພື່ອສືບຕໍ່ຈັດຕັ້ງປະຕິບັດ ໂຄງການຮ່ວມມືສາກົນເພື່ອການສຶກສາໄລຍະສາມ ໂຄງການຮຽນຮູ້ ແລະ ຄວາມເທົ່າທຽມ (GPEIII:LEAP)


**ນຳສະເໜີໂດຍ: ທ່ານ ອະນຸແພງ ແກ້ວວົງສາ**

**ຮອງຫົວໜ້າກົມແຜນການ, ຫົວໜ້າຄະນະຮັບຜິດຊອບໂຄງການ GPEIII:LEAP**


**ຄັ້ງວັນທີ 24 ກັນຍາ 2024**

# ເນື້ອໃນ

1. ຄວາມເປັນມາ:
2. ຈຸດປະສົງຫຼັກ:
3. ຂົງເຂດ ແລະ ເປົ້າໝາຍໃນການຈັດຕັ້ງປະຕິບັດ:
4. ກິດຈະກໍາທີ່ເປັນບູລິມະສິດ ແລະ ງົບປະມານໃນການຈັດຕັ້ງປະຕິບັດ:
5. ແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ:

# 1. ຄວາມເປັນມາ

ພາຍຫຼັງທີ່ໂຄງການ GPEIII:LEAP ໄດ້ປັບປຸງຄືນໃໝ່, ທີມງານທະນາຄານໂລກ ກໍໄດ້ເຂົ້າພົບ ແລະ ລາຍງານໃຫ້ຄະນະນຳກະຊວງໄດ້ຮັບຊາບ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ, ເຊິ່ງເຫັນວ່າໂຄງການໄດ້ຈັດຕັ້ງປະຕິບັດມີຄວາມຄືບໜ້າຫຼາຍດ້ານ ແລະ ມີຜົນໄດ້ຮັບທີ່ດີ ແຕ່ຍັງມີບາງຂອບເຂດວຽກງານທີ່ຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດຕື່ມ ເພື່ອເຮັດໃຫ້ໂຄງການປະສົບຜົນສຳເລັດ ແລະ ມີປະສິດທິພາບສູງສຸດ.

ໃນວັນທີ 30 ສິງຫາ 2024 ທີ່ຜ່ານມາ, ກົມແຜນການ ກະຊວງສຶກສາທິການ ແລະ ກິລາ ກໍໄດ້ຮັບໜັງສື ກ່ຽວກັບການໃຫ້ການສະໜັບສະໜູນທຶນເພີ່ມເຕີມຈາກທະນາຄານໂລກ ແລະ ຂະຫຍາຍໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການ GPEIII:LEAP ຮອດປີ 2029 ແລະ ນຳສະເໜີຄວາມເປັນໄປໄດ້ເພື່ອສືບຕໍ່ຈັດຕັ້ງປະຕິບັດແຜນກິດຈະກຳທີ່ເປັນບູລິມະສິດຂອງໜ່ວຍງານຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງ, ເຊິ່ງລວມງົບປະມານທີ່ເພີ່ມເຕີມທັງໝົດ 15,990,000 ໂດລາສະຫະລັດ.

## 2. ຈຸດປະສົງຫຼັກ

- ເພື່ອສືບຕໍ່ ແລະ ຂະຫຍາຍກິດຈະກຳ ແລະ ຈັດສັນງົບປະມານເພີ້ມເຕີມເຂົ້າໃນອົງປະກອບທີ 1 ຂອງໂຄງການ: ການກະກຽມ ແລະ ຊຸກຍູ້ຜູ້ຮຽນ;
- ເພື່ອສືບຕໍ່ ແລະ ຂະຫຍາຍກິດຈະກຳ ແລະ ຈັດສັນງົບປະມານເພີ້ມເຕີມເຂົ້າໃນອົງປະກອບທີ 3 ຂອງໂຄງການ: ການບໍລິຫານໂຮງຮຽນທີ່ມີປະສິດທິຜົນ;
- ເພື່ອປຶກສາຫາລືກ່ຽວກັບບັນດາກິດຈະກຳອື່ນໆທີ່ເປັນບຸລິມະສິດຄວາມຕ້ອງການຈຳເປັນອັນຮີບດ່ວນ ພາຍງົບປະມານເພີ້ມເຕີມ ຈາກທະນາຄານໂລກ.

## 3. ຂົງເຂດ ແລະ ເປົ້າໝາຍໃນການຈັດຕັ້ງປະຕິບັດ

- 40 ເມືອງບູລິມະສິດ (ເມືອງທີ່ທຸກຍາກ) ຂອງລັດຖະບານ.
- ການເພີ່ມທຶນນີ້ຄາດວ່າຈະເຮັດໃຫ້ມີຈຳນວນເດັກນ້ອຍ/ຄົວເຮືອນ ແລະ ບຸກຄະລາກອນດ້ານການສຶກສາໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ.

4. ກິດຈະກຳທີ່ເປັນບຸລິມະສິດ ແລະ ງົບປະມານໃນການຈັດຕັ້ງປະຕິບັດ:

.

# ອົງປະກອບ 1: CCDG Shelters

- **ທາງເລືອກທີ 1:** ປັບປຸງຫ້ອງຮຽນທີ່ມີຢູ່ຈຳນວນ 245 ຫ້ອງເພື່ອເຮັດໃຫ້ຫ້ອງຮຽນເຫຼົ່ານັ້ນມີຄວາມປອດໄພ, ມີພື້ນທີ່ໃນການຮຽນຮູ້ຫຼາຍຂຶ້ນ ແລະ ອື່ນໆ (ປັບປຸງບາງບ້ານໂດຍສະເພາະຫ້ອງຮຽນໃນບ້ານທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ມີຄຸນນະພາບຕ່ຳ)
  - (ເພີ່ມທຶນ 50% ຂອງແຕ່ລະຫຼັງ - $2.500)
- **ທາງເລືອກທີ 2:** ຂະຫຍາຍຫ້ອງຮຽນເພີ່ມຈາກ 245 ຫ້ອງ ເປັນ 345 ຫ້ອງ. ຈຳນວນຫ້ອງຮຽນທີ່ເພີ່ມນີ້ ຈະໃຫ້ມີຢູ່ໃນເຂດທີ່ມີເດັກອາຍຸລະຫວ່າງ 3-4 ປີ ເຂົ້າຮຽນພຽງພໍ (ຖານຂໍ້ມູນນີ້ຈະໃຫ້ສະແດງຢູ່ໃນລະບົບ EMIS).
  - ເພີ່ມຫ້ອງຮຽນ CCDG ຈຳນວນ 100 ຫຼັງ ມີມູນຄ່າ US$7.500 ຕໍ່ຫຼັງ, ລວມທັງໝົດ= 0.75 ລ້ານໂດລາສະຫະລັດ.

# ອົງປະກອບຍ່ອຍ 1.1: CCDG (ຜູ້ດູແລເດັກ)

- **ທາງເລືອກທີ 1: ສືບຕໍ່ໃຫ້ເງິນອຸດໜູນຜູ້ດູແລເດັກເພີ່ມຕື່ມໃນ 2 ສົກຮຽນ (27/28 & 28/29)**
  - US$0.3mil/ປີ – ລວມທັງໝົດ US$0.6mil
- **ທາງເລືອກທີ 2: ໃຫ້ເງິນອຸດໜູນຜູ້ດູແລເດັກໃໝ່ທີ່ສອນຫ້ອງຮຽນໃນມື້ທີ່ສ້າງສຳເລັດ (ສະເລ່ຍ 4 ສົກຮຽນ ທີ່ຈະໄດ້ສະໜອງເງິນອຸດໜູນໃຫ້ຜູ້ດູແລເດັກຈຳນວນ 200 ຄົນ– ຫ້ອງຮຽນໜຶ່ງມີຜູ້ດູແລເດັກ 2 ຄົນ) – ຈຳນວນ US$600/ຄົນ/ປີ.**
  - US$0.12mil ຕໍ່ປີ. ລວມທັງໝົດ US$0.48mil

## ອົງປະກອບຍ່ອຍ 1.1: CCDG (ເງິນບໍລິຫານ)

- **ທາງເລືອກທີ 1: ມູນຄ່າບໍລິຫານສໍາລັບ 2 ສົກຮຽນເພີ່ມ (27/28 & 28/29)**
  - US$0.055mil/ປີ –ລວມທັງໝົດ US$0.11mil
- **ທາງເລືອກທີ 2: ມູນຄ່າບໍລິຫານນັບຈາກມື້ທີ່ຫ້ອງຮຽນໄດ້ສ້າງສໍາເລັດ (ສະເລ່ຍ 4 ສົກຮຽນໃນຈໍານວນຫ້ອງຮຽນ CCDG 100 (ເຫ່ງ) – ມູນຄ່າຕໍ່ຫ້ອງ US$225/ປີ.**
  - US$0.023/ປີ –ລວມທັງໝົດແມ່ນ US$0.090mil

# ອົງປະກອບຍ່ອຍ 1.1: ການຕິດຕາມ ແລະ ການຝຶກອົບຮົມເຂັ້ມ

- **ທາງເລືອກທີ 1: ເພີ້ມການຝຶກອົບຮົມເຂັ້ມອອກໄປຕື່ມ 2 ປີ ສໍາລັບຫ້ອງຮຽນ CCDG ຈໍານວນ 245 ຫ້ອງ (ມີຜູ້ດູແລເດັກ 490 ຄົນ) ມູນຄ່າການຝຶກອົບຮົມ US$0.25mil/ຕໍ່ປີ. ເພີ່ມການລົງຕິດຕາມຕື່ມເປັນ 2 ສົກຮຽນ ມີມູນຄ່າ US$0.1mil/ປີ**
  - ລວມທັງໝົດແມ່ນ US$0.5mil + US$0.2mil = US0.7mil (ສໍາລັບສອງສົກຮຽນ)
- **ທາງເລືອກທີ 2: ຂະຫຍາຍຫ້ອງຮຽນເພີ່ມ 100 ຫ້ອງ (ມີຜູ້ດູແລເດັກ 200 ຄົນ) ສໍາລັບ 4 ສົກຮຽນ.**
  - ລວມມູນຄ່າທັງໝົດແມ່ນ US$0.7mil

## ອົງປະກອບຍ່ອຍ 1.1: ອຸປະກອນເຄື່ອງຫຼິ້ນກາງແຈ້ງ ແລະ ເຄື່ອງຫຼິ້ນສົ່ງເສີມທັກສະການຮຽນຮູ້ຂອງເດັກ:

1) ອຸປະກອນເຄື່ອງຫຼິ້ນກາງແຈ້ງ:

- **ທາງເລືອກທີ 1:** ມີອຸປະກອນໃຫ້ຫ້ອງຮຽນ CCDG 100 ແຫ່ງ
  - @ຕໍ່ຫ້ອງຮຽນ US$1,600) ລວມທັງໝົດແມ່US$1.6Kx100=US$0.16m

2) ອຸປະກອນເຄື່ອງຫຼິ້ນສົ່ງເສີມທັກສະການຮຽນຮູ້ຂອງເດັກ:

- **ທາງເລືອກທີ 1:** ສະໜອງເຄື່ອງຫຼິ້ນໃຫ້ຫ້ອງຮຽນ CCDG 100 ແຫ່ງ
  - **@ ຕໍ່ຫ້ອງຮຽນ US$1,000)** ລວມທັງໝົດແມ່US$1Kx100=US$0.1m
- **ທາງເລືອກທີ 2:** ສະໜອງຫໍສະໝຸດເຄື່ອງຫຼິ້ນໃຫ້ຫ້ອງຮຽນ CCDG ທີ່ມີທັງໝົດ 245 ແຫ່ງ
  - ລວມທັງໝົດແມ່ນ US$1Kx245=US$245K

# ອົງປະກອບຍ່ອຍ 1.2: ການສອນຫ້ອງຄວບອາຍຸ (MAT)

- **ທາງເລືອກທີ 1:** ຈຳນວນໂຮງຮຽນຍັງຄືເກົ່າ (262) ແຕ່ຂະຫຍາຍເວລາອອກໄປຕື່ມ 2 ປີ
  - (ຈຳນວນງົບປະມານຕໍ່ໂຮງຮຽນຕໍ່ປີແມ່ນ US$1,400) ລວມທັງໝົດ 262x1400x2= US$0.73mil
- **ທາງເລືອກທີ 2:** ເພີ້ມຈຳນວນບ້ານໃໝ່ຈຳນວນ 132 ບ້ານ ຢູ່ໃນ 40 ເມືອງ
  - (ຈຳນວນງົບປະມານຕໍ່ໂຮງຮຽນຕໍ່ປີແມ່ນ US$1,400) ລວມທັງໝົດ 132x1400x2= US$0.37mil

# ອົງປະກອບຍ່ອຍ 1.2: ການກຽມຄວາມພ້ອມດ້ານການອ່ານ (RRP)

- **ທາງເລືອກທີ 1:** **ກິດຈະກຳການອ່ານຢູ່ເຮືອນ (ຊື້ປຶ້ມ 8 ຫົວຕໍ່ນັກຮຽນໜຶ່ງຄົນ). ປຶ້ມຫົວໜຶ່ງແມ່ນ US$0.5. ໃນປະຈຸບັນໂຄງການນີ້ມີຈຳນວນ 799 ຫ້ອງອ່ານ.**
  - ວາງແຜນທີ່ຈະແຈກຢາຍປຶ້ມໃຫ້ເດັກເອົາປຶ້ມເມືອອ່ານຢູ່ເຮືອນ. ມີເດັກ 16,000 ຄົນ x 8 ຫົວ x US$0.5=US$0.064mil ຕໍ່ປີ. ລວມທັງໝົດ 4 ປີ: US$0.256m
- **ທາງເລືອກທີ 2:** **ຕ້ອງຈັດໃຫ້ມີການຝຶກອົບຮົມເຂັ້ມສຳລັບສົກຮຽນ 27/28 ແລະ 28/29.**
  - US$0.5mil x 2 ປີ= US$1mil

# ອົງປະກອບຍ່ອຍ 1.6: ສົ່ງເສີມອາຫານທ່ຽງໃນໂຮງຮຽນ (NSMP)

- **ທາງເລືອກທີ 1: ຂະຫຍາຍເວລາອອກໄປຕື່ມ 2 ສົກຮຽນ (26/27 ແລະ 27/28) (ຫ້ອງກຽມ ແລະ ປະຖົມ ຈຳນວນ 578; ໃນ 13 ເມືອງ ແລະ 6 ແຂວງ)** :US$1.7mil
- **ທາງເລືອກທີ 2: ເພີ່ມເມືອງໃນ 6 ແຂວງ (ເພີ່ມຈຳນວນໂຮງຮຽນເປັນ 2 ເທົ່າ)** :US$1.7mil
- **ທາງເລືອກທີ 3: ເພີ່ມເງິນໃຫ້ວຽກງານອາຫານທ່ຽງໃນໂຮງຮຽນ** 30%-50% ຈາກງົບປະມານທີ່ ກະຊວງສຶກສາທິການ ແລະ ກິລາ/ລັດຖະບານຈ່າຍຄ່າອາຫານທ່ຽງຕໍ່ຄົນ.
  - (US$3.4mil x 30% = US$1.1mil)
- **ທາງເລືອກທີ 4: ພັດທະນາສວນຜັກໃນໂຮງຮຽນ <u>(ໂຄງການສົ່ງເສີມອາຫານທ່ຽງໃນໂຮງຮຽນໃນ ສປປ ລາວ ໂດຍຫຍໍ້ – WB 2013</u>**
  - US$200 ຕໍ່ໂຮງຮຽນ (ມີຈຳນວນ 578 ໂຮງຮຽນ ໂດຍເລືອກເພີ່ມຈຳນວນໂຮງຮຽນຂຶ້ນເປັນ 2 ເທົ່າ ຈະໄດ້ 578x2x$200= 232K ຕໍ່ປີ)

## ອົງປະກອບຍ່ອຍ 3.1: ການບໍລິຫານໂຮງຮຽນທີ່ມີປະສິດທິຜົນ

- ເງິນບໍລິຫານສະຖານການສຶກສາ: ມີຄວາມຕ້ອງການນໍາໃຊ້ເງິນ SBG ເກີນກວ່າມູນຄ່າທີ່ໄດ້ຮັບ ເນື່ອງຈາກອັດຕາແລກປ່ຽນຂອງເງິນຕາມີການເໜັງຕີງຫຼາຍ.
  - ຈະນໍາໃຊ້ທຶນເພີ້ມເຕີມປະມານ 1 ລ້ານໂດລາສະຫະລັດ ເທົ່ານັ້ນເຂົ້າໃນວຽກງານນີ້ ຈົນກວ່າຈະສິ້ນສຸດໂຄງການ.
  - ຈະສືບຕໍ່ໃຫ້ທຶນໃນການສະໜັບສະໜູນກິດຈະກໍາທີ່ໄດ້ລະບຸໄວ້ໃນແຜນພັດທະນາໂຮງຮຽນ (SDP).

## ອົງປະກອບຍ່ອຍ 3.1: ການບໍລິຫານໂຮງຮຽນທີ່ມີປະສິດທິຜົນ

- **ກິດຈະກຳໃໝ່**: ໃຫ້ທຶນສຳລັບການປົວລະປັດຮັກສາໂຮງຮຽນ/ທຶນກໍ່ສ້າງໂຮງຮຽນຂະໜາດນ້ອຍໃໝ່
  - ສູງສຸດ US$10,000 ຕໍ່ໂຮງຮຽນ ໃນຈຳນວນ 50 ໂຮງຮຽນນັບແຕ່ປີ 2026-2029, ຄິດສະເລ່ຍທຶນທັງໝົດ: **US$0.5mil**
- **ກິດຈະກຳໃໝ່**: ເງິນບໍລິຫານຂອງເມືອງ (DBG):
  - ໃຫ້ທຶນສູງສຸດ US$15,000 ຕໍ່ເມືອງຕໍ່ປີ ພາຍໃນ 3 ປີ, ຢູ່ໃນ 40 ເມືອງ, **ຄິດສະເລ່ຍທັງໝົດ: 15,000x40x3= US$1.8mil**

# ທຶນໂຄງການ GPE III/LEAP ແລະ ງົບປະມານເພີ່ມເຕີມ

| ລາຍລະອຽດຂອງແຕ່ລະອົງປະກອບ | ການຈັດສັນທຶນເບື້ອງຕົ້ນ | ການຈັດສັນທຶນເພີ່ມ | ການຈັດສັນທຶນທີ່ໄດ້ຮັບທັງໝົດ |
|---|---|---|---|
| ອົງປະກອບທີ 1: ການກະກຽມ ແລະ ຊຸກຍູ້ຜູ້ຮຽນ | | | |
| ອົງປະກອບຍ່ອຍ 1.1 ໜ່ວຍງານຄຸ້ມຄອງ ແລະ ຈັດຕັ້ງປະຕິບັດກຸ່ມພັດທະນາເດັກໃນຊຸມຊົນ (CCDG) | 4,900,000 | 3,840,000 | 8,740,000 |
| ອົງປະກອບຍ່ອຍ 1.2 ການສອນຫ້ອງຄວບອາຍຸ (MAT) | 1,000,000 | 1,100,000 | 2,100,000 |
| ອົງປະກອບຍ່າຍ 1.3 ການພັດທະນາເນື້ອໃນ ແລະ ກິດຈະກຳເພີ່ມເຕີມ ສຳລັບການຮຽນການສອນຜ່ານການຫຼິ້ນຂອງເດັກ 3-4 ປີ | 80,000 | 0 | 80,000 |
| ອົງປະກອບຍ່ອຍ 1.4 ການກຽມຄວາມພ້ອມດ້ານການອ່ານ (RRP) | 2,360,000 | 1,250,000 | 3,610,000 |
| ອົງປະກອບຍ່ອຍ 1.5 ການກວດກາຄວາມບົກຜ່ອງຂອງເດັກ | 594,000 | 0 | 594,000 |
| ອົງປະກອບຍ່ອຍ 1.6 ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ (NSMP) | 3,000,000 | 6,000,000 | 9,000,000 |
| Total Comp 1 | 11,934,000 | 12,190,000 | 24,124,000 |
| ອົງປະກອບທີ 2: ການກະກຽມ ແລະ ຊຸກຍູ້ຄູສອນ | | | |
| ອົງປະກອບຍ່ອຍ 2.1: ການປັບປຸງຄຸນນະພາບຂອງວຽກງານພັດທະນາວິຊາຊີບຄູ · | 10,485,000 | 0 | 10,485,000 |
| ອົງປະກອບ 2.2: ການປັບປຸງວຽກງານການຈັດສັນຄູ | 2,770,000 | 0 | 2,770,000 |
| Total Comp 2 | 13,255,000 | 0 | 13,255,000 |
| ອົງປະກອບທີ 3. ການບໍລິຫານໂຮງຮຽນ ແລະ ການຄຸ້ມຄອງໂຄງການທີ່ມີປະສິດທິຜົນ | | | |
| ອົງປະກອບຍ່ອຍ 3.1: ການບໍລິຫານໂຮງຮຽນທີ່ມີປະສິດທິຜົນ | 14,627,000 | 4,300,000 | 18,927,000 |
| ເງິນບໍລິຫານສະຖານການສຶກສາ | 14,627,000 | 1,000,000 | 15,627,000 |
| ທຶນບົວລະບັດຮັກສາໂຮງຮຽນ | 0 | 500,000 | 500,000 |
| ທຶນບໍລິຫານເມືອງ | 0 | 1,800,000 | 1,800,000 |
| ລວມທັງໝົດສຳລັບກິດຈະກຳຍ່ອຍໃໝ່ພາຍໃຕ້ອົງປະກອບຍ່ອຍ 3.1 | 0 | 3,300,000 | 3,300,000 |
| ອົງປະກອບຍ່ອຍ 3.2: ການຄຸ້ຄອງໂຄງການ | 5,810,000 | 500,000 | 6,310,000 |
| ລວມທັງ 3 ອົງປະກອບ | 20,437,000 | 3,800,000 | 24,237,000 |
| ລວມທັງໝົດ | 45,626,000 | 15,990,000 | 61,616,000 |

# ຜົນຂອງກອງປະຊຸມຄັ້ງວັນທີ 19 ກັນຍາ 2024 ກັບໜ່ວຍງານທີ່ກ່ຽວຂ້ອງ

- **ອົງປະກອບ 1.1**: **ຫ້ອງຮຽນຂອງກຸ່ມພັດທະນາເດັກໃນຊຸມຊົນ (CCDG Shelter)** ເຫັນດີຕາມທາງເລືອກທີ 1: ປັບປຸງຫ້ອງຮຽນທີ່ມີຢູ່ຈຳນວນ 245 ຫ້ອງ ເພື່ອເຮັດໃຫ້ຫ້ອງຮຽນເຫຼົ່ານັ້ນມີຄວາມປອດໄພ, ມີພື້ນທີ່ໃນການຮຽນຮູ້ຫຼາຍຂຶ້ນ ແລະ ອື່ນໆ (ປັບປຸງບາງບ້ານ ໂດຍສະເພາະຫ້ອງຮຽນໃນບ້ານທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ມີຄຸນນະພາບຕ່ຳ) (ເພີ່ມທຶນ 50% ຂອງແຕ່ລະຫຼັງ - $2.500);
- **ອົງປະກອບ 1.1: ຜູ້ດູແລເດັກຂອງກຸ່ມພັດທະນາເດັກໃນຊຸມຊົນ (CCDG)** ເຫັນດີຕາມທາງເລືອກທີ 1: ສືບຕໍ່ໃຫ້ເງິນອຸດໜູນຜູ້ດູແລເດັກເພີ່ມຕື່ມໃນ 2 ສົກຮຽນ (27/28 & 28/29), US$0.3mil/ປີ – ລວມທັງໝົດ US$0.6mil;

# ຜົນຂອງກອງປະຊຸມຄັ້ງວັນທີ 19 ກັນຍາ 2024 ກັບໜ່ວຍງານທີ່ກ່ຽວຂ້ອງ

- **ອົງປະກອບ 1.1: ເງິນບໍລິຫານຂອງກຸ່ມພັດທະນາເດັກໃນຊຸມຊົນ (CCDG)** ເຫັນດີຕາມທາງເລືອກທີ 1: ມູນຄ່າບໍລິຫານສຳລັບ 2 ສົກຮຽນເພີ່ມ (27/28 & 28/29) US$0.055mil/ປີ –ລວມທັງໝົດ US$0.11mil;
- **ອົງປະກອບ 1.1: ການຕິດຕາມ ແລະ ການຝຶກອົບຮົມເຂັ້ມໃຫ້ຜູ້ດູແລເດັກຂອງກຸ່ມພັດທະນາເດັກໃນຊຸມຊົນ (CCDG)** ເຫັນດີຕາມທາງເລືອກທີ 1: ເພີ້ມການຝຶກອົບຮົມເຂັ້ມອອກໄປຕື່ມ 2 ປີ ສຳລັບ ຫ້ອງຮຽນ CCDG ຈຳນວນ 245 ຫ້ອງ (ມີຜູ້ດູແລເດັກ 490 ຄົນ) ມູນຄ່າການຝຶກອົບຮົມ US$0.25mil/ຕໍ່ປີ. ເພີ່ມການລົງຕິດຕາມຕື່ມເປັນ 2 ສົກຮຽນ ມີມູນຄ່າ US$0.1mil/ປີ, ລວມທັງໝົດແມ່ນ US$0.5mil + US$0.2mil = US0.7mil (ສຳລັບສອງສົກຮຽນ);

# ຜົນຂອງກອງປະຊຸມຄັ້ງວັນທີ 19 ກັນຍາ 2024 ກັບໜ່ວຍງານທີ່ກ່ຽວຂ້ອງ

- **ອົງປະກອບຍ່ອຍ 1.1: ອຸປະກອນເຄື່ອງຫຼິ້ນກາງແຈ້ງ ແລະ ເຄື່ອງຫຼິ້ນສິ່ງເສີມທັກສະການຮຽນຮູ້ຂອງເດັກ**: ເຫັນດີຕາມທາງເລືອກທີ 1: ມີອຸປະກອນໃຫ້ຫ້ອງຮຽນ CCDG 100 ແຫ່ງ @ຕໍ່ຫ້ອງຮຽນ US$1,600) ລວມທັງໝົດແມ່ US$1.6Kx100=US$0.16m ແລະ ທາງເລືອກທີ 1: ສະໜອງເຄື່ອງຫຼິ້ນໃຫ້ຫ້ອງຮຽນ CCDG 100 ແຫ່ງ @ ຕໍ່ຫ້ອງຮຽນ US$1,000) ລວມທັງໝົດແມ່ US$1Kx100=US$0.1m;

- **ອົງປະກອບຍ່ອຍ 1.2**: ການສອນຫ້ອງຄວບອາຍຸ (MAT) ເຫັນດີຕາມທາງເລືອກທີ 2: ເພີ່ມຈຳນວນບ້ານໃໝ່ຈຳນວນ 132 ບ້ານ ຢູ່ໃນ 40 ເມືອງ, (ຈຳນວນງົບປະມານຕໍ່ໂຮງຮຽນຕໍ່ປີແມ່ນ US$1,400) ລວມທັງໝົດ 132x1400x2= US$0.37mil.

# ຜົນຂອງກອງປະຊຸມຄັ້ງວັນທີ 19 ກັນຍາ 2024 ກັບໜ່ວຍງານທີ່ກ່ຽວຂ້ອງ

- **ອົງປະກອບຍ່ອຍ 1.2**: ການກຽມຄວາມພ້ອມດ້ານການອ່ານ (RRP) ເຫັນດີທາງເລືອກທີ 2: ຕ້ອງຈັດໃຫ້ມີການຝຶກອົບຮົມເຂັ້ມສໍາລັບສົກຮຽນ 27/28 ແລະ 28/29. US$0.5mil x 2 ປີ= US$1mil

- **ອົງປະກອບຍ່ອຍ 1.6**: ສິ່ງເສີມອາຫານທ່ຽງໃນໂຮງຮຽນ (NSMP) ເຫັນດີທາງເລືອກທີ 3 ເປັນບູລິມະສິດທີ 1: ເພີ່ມເງິນໃຫ້ວຽກງານອາຫານທ່ຽງໃນໂຮງຮຽນ 30%-50% ຈາກງົບປະມານທີ່ ກະຊວງສຶກສາທິການ ແລະ ກິລາ/ລັດຖະບານຈ່າຍຄ່າອາຫານທ່ຽງຕໍ່ຄົນ. (US$3.4mil x 30% = US$1.1mil) ແລະ ທາງເລືອກທີ 4 ເປັນສໍາຮອງ: ພັດທະນາສວນຜັກໃນໂຮງຮຽນ (ໂຄງການສິ່ງເສີມອາຫານທ່ຽງໃນໂຮງຮຽນໃນ ສປປ ລາວ ໂດຍຫຍໍ້ – WB 2013, US$200 ຕໍ່ໂຮງຮຽນ (ມີຈໍານວນ 578 ໂຮງຮຽນ ໂດຍເລືອກເພີ່ມຈໍານວນໂຮງຮຽນຂຶ້ນເປັນ 2 ເທົ່າ ຈະໄດ້ 578x2x$200= 232K ຕໍ່ປີ);

# ຜົນຂອງກອງປະຊຸມຄັ້ງວັນທີ 19 ກັນຍາ 2024 ກັບໜ່ວຍງານທີ່ກ່ຽວຂ້ອງ

- **ອົງປະກອບຍ່ອຍ 3.1**: ການບໍລິຫານໂຮງຮຽນທີ່ມີປະສິດທິຜົນ ເຫັນດີຈະນຳໃຊ້ທຶນເພີ່ມເຕີມປະມານ 1 ລ້ານໂດລາສະຫະລັດ ເທົ່ານັ້ນເຂົ້າໃນວຽກງານນີ້ ຈົນກວ່າຈະສິ້ນສຸດໂຄງການ ແລະ ກິດຈະກຳໃໝ່: ໃຫ້ທຶນສຳລັບການບົວລະບັດຮັກສາໂຮງຮຽນ/ທຶນກໍ່ສ້າງໂຮງຮຽນຂະໜາດນ້ອຍໃໝ່ສູງສຸດ US$10,000 ຕໍ່ໂຮງຮຽນ ໃນຈຳນວນ 50 ໂຮງຮຽນນັບແຕ່ປີ 2026-2029, ຄິດສະເລ່ຍທຶນທັງໝົດ: US$0.5mil ແລະ ກິດຈະກຳໃໝ່: ເງິນບໍລິຫານຂອງເມືອງ (DBG): ໃຫ້ທຶນສູງສຸດ US$15,000 ຕໍ່ເມືອງຕໍ່ປີ ພາຍໃນ 3 ປີ, ຢູ່ໃນ 40 ເມືອງ, ຄິດສະເລ່ຍທັງໝົດ: 15,000x40x3= US$1.8mil.

# ຂອບເວລາໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ:

| ລາຍລະອຽດໜ້າວຽກສຳຄັນ | ຄາດໝາຍສຳເລັດ |
|---|---|
| ຮ່າງເນື້ອໃນບົດບັນທຶກຄວາມເຂົ້າໃຈ | 14-ກັນຍາ-2024 |
| ຈັດກອງປະຊຸມປຶກສາຫາລືເພື່ອຕັດສິນໃຈ ຂອງຄະນະຮັບຜິດຊອບ | 30-ກັນຍາ-2024 |
| ແຈ້ງ ແລະ ແຈກຢາຍເອກະສານປະເມີນການຈັດຕັ້ງປະຕິບັດໂຄງການ | 14-ຕຸລາ-2024 |
| ດຳເນີນການປະເມີນ | 21-25-ຕຸລາ-2024 |
| ການທົບທວນຄືນດ້ານຄຸນນະພາບ | 18-ພະຈິກ-2024 |
| ສະຫຼຸບການປະເມີນໂຄງການ | 04-ທັນວາ-2024 |
| ທົບທວນການຕັດສິນໃຈ | 11-ທັນວາ-2024 |
| ອະນຸມັດ | ມັງກອນ-2025 |
| ຮັບຮອງ | ກຸມພາ-2025 |
| ວັນທີປິດໂຄງການເບື້ອງຕົ້ນ | ພຶດສະພາ 31, 2027 |
| ວັນທີປິດໂຄງການທີ່ສະເໜີ | ມິຖຸນາ 30, 2029 |

# ຂອບໃຈຫຼາຍໆ